# ຮອຍພຣະບາດເທິງດິນຊາຍ

## ຮູບແບບກຂອງການເປັນຜູ້ຕິດຕາມຂອງພຣະເຍຊູ

### ຈຸດປະສົງ

ຜູ້ທີ່ເດີນຕາມພຣະຄຣິດນັ້ນຄືຜູ້ທີ່ເຊື່ອແລະໄວ້ວາງໃຈໃນພຣະອົງຕະຫລອດເວລາທີ່ພຣະຄຣິດປ່ຽນແປງເຂົາ ແລະສົ່ງເຂົາໄປສອນຄົນອື່ນໃຫ້ເປັນສາວົກ. ໃນບົດຮຽນນີ້ທ່ານຈະໄດ້ຮຽນຮູ້ເຖິງການໄວ້ວາງໃຈໃນພຣະເຍຊູ ພຣະອົງຈະສອນທ່ານໃນສິ່ງເຫລົ່ານີ້:

- ຮູ້ຄວາມໝາຍຂອງການເປັນຜູ້ຕິດຕາມພຣະເຍຊູ
- ຮູ້ສຶກໝັ້ນໃຈແລະຮູ້ສຶກຖືກເຊີນຊວນໃຫ້ເປັນສາວົກທີ່ເຂັ້ມແຂງ
- ຕອບສະໜອງໂດຍການເຊື້ອເຊີນໃຫ້ພຣະອົງເປັນລ້ຽງດູທ່ານໃຫ້ເປັນສາວົກຂອງພຣະອົງ

### ຄຳນຳ

ຖ້າມີຄົນມາເລົ່າເລື່ອງທ່ານຟັງວ່າ ໃນອາດີດເຂົາເຄີຍເປັນສັງກະລີອູ້ມບາດຕິດຕາມອາຈານຫລືຫລວງປູ່ທ່ານກໍອາດສາມາດວາດພາບຊີວິດການເປັນຢູ່ຂອງເຂົາໃນວັດວ່າເປັນແນວໃດ.

ໃນສັດຕະວັດທີທຳອິດ ຄົນຢິວມີພູມປັນຍາຂອງການສາວົກພຣະເຍຊູ. ໃນປະຈຸບັນນີ້ ຫລາຍຄົນອາດສັບເຖິງຄຳວ່າ "ສາວົກພຣະເຍຊູ" ບາງຄົນອາດຄິດວ່າ ສາວົກພຣະເຍຊູຄືສະມາຊິດໂບດ ບາງຄົນກໍຄິດວ່າສາວົກພຣະເຍຊູຄື ຜູ້ນຳໂບດ ແລະບາງຄົນກໍອາດຄິດພຽງແຕ່ວ່າ ສາວົກພຣະເຍຊູຄື ສິບສອງຄົນທີ່ຕິດ-ຕາມພຣະເຍຊູໃນສະໄໝກ່ອນ. ສາວົກພຣະເຍຊູຄືຫຍັງ? ເຮັດແນວໃດເຖິງຈະມາເປັນສາວົກພຣະອົງໄດ້?

ພຣະເຍຊູໄດ້ເປັນແລະກໍຍັງເປັນເຈົ້ານາຍຄູສອນສາວົກ. ເປັນເວລາສາມປີພຣະອົງໄດ້ໃຊ້ເວລາກັບສາ-ວົກສິບສອງຄົນຂອງພຣະອົງຜູ້ເປັນຄົນທຳມະດາ. ພຣະອົງເດີນທາງກັບເຂົາ, ກິນກັບເຂົາ, ນອນກັບເຂົາແລະນະມັດສະການກັບເຂົາ. ທຸກຄົນຍົກເວັ້ນຄົນດຽວໄດ້ກາຍມາເປັນເໝືອນພຣະອົງ.

### ຄົ້ນຄວ້າ

ເຮົາຈະຄົ້ນຄວ້າເຖິງ 12 ຄຳເຊີນຂອງພຣະເຍຊູທີ່ພຣະອົງກຳລັງເຊີນເຮົາທຸກມື້ນີ້ຢ່າງທີ່ພຣະອົງໄດ້ເຊີນສາວົກຂອງພຣະອົງໃນສະໄໝກ່ອນ.

1. **<u>ອ່ານມັດທາຍ 4:19.</u>** ພຣະເຍຊູໄດ້ຂໍສິ່ງໃດຈາກທ່ານໃນຂະນະທີ່ທ່ານເລີ່ມຕົ້ນເດີນໃນທາງແຫ່ງຄວາມເຊື່ອ?

**ຄຳເຊີນ 1**...........................................................................................

ການເດີນທາງຂອງແຕ່ລະຄົນເລີ່ມຕົ້ນທີ່ການກ້າວຂາກ້າວທຳອິດອອກໄປ ການທີ່ເຮົາຈະເດີນໃນທາງແຫ່ງຄວາມເຊື່ອໃນພຣະເຍຊູກໍເປັນເຊັ່ນນີ້. ຜູ້ທີ່ໄປກ່ອນໜ້າເຮົາຮູ້ລ່ວງໜ້າເຮົາແລ້ວວ່າເສັ້ນ-ທາງທີ່ເຮົາຈະເດີນນັ້ນເປັນແນວໃດ ມີອຸປະສັກ ແລະມີຄວາມຊົມຊື່ນຫລາຍປານໃດ. ທ່ານພ້ອມຫລືຍັງທີ່ຈະອອກເດີນໃນທາງແຫ່ງຄວາມເຊື່ອ?

2. **ອ່ານ ໂຢຮັນ 15:15**. ຄວາມສຳພັນພິເສດແບບໃດທີ່ພຣະເຍຊູຢາກຈະມີກັບເຮົາ?

   **ຄຳເຊີນ 2**...........................................................................................

   ພຣະເຍຊູຖືວ່າການສ້າງສຳພັນກັບທ່ານເປັນເລື່ອງສຳຄັນຫລາຍ. ທ່ານພ້ອມແລ້ວຫລືຍັງທີ່ຈະມີສາຍສຳພັນກັບພຣະອົງ?

3. **ອ່ານ ໂຢຮັນ 21:16**. ນອກຈາກຄວາມສຳພັນແລ້ວ ພຣະເຍຊູຂໍສິ່ງໃດອີກຈາກທ່ານ?

   **ຄຳເຊີນ 3.** ...........................................................................................

   ພຣະເຍຊູປາດຖະໜາຫົວໃຈຂອງທ່ານ. ພຣະອົງຕ້ອງການຄວາມຮັກທັງໝົດຂອງທ່ານ.

4. **ອ່ານ ມາລະໂກ 4:10**. ພຣະເຍຊູຢາກໃຫ້ທ່ານເຮັດສິ່ງນີ້ໄດ້ຕາມສະບາຍ.

   **ຄຳເຊີນ 4.** ...........................................................................................

   ພຣະເຍຊູບໍ່ເຄີຍຢ້ານທີ່ເຮົາຈະຖາມພຣະອົງ. ພຣະອົງປາດຖະໜາໃຫ້ທ່ານນຳຄວາມສົງໄສ, ຄວາມຢ້ານກົວ, ແລະຄວາມສັບສົນມາຫາພຣະອົງ. ພຣະອົງປາດຖະໜາຈະສົນທະນາກັບທ່ານ.

5. **ອ່ານ ມາລະໂກ 1:15, ໂຢຮັນ 3:16**. ພຣະເຍຊູຢາກໃຫ້ທ່ານມີຄວາມເຊື່ອໃນພຣະອົງ

   **ຄຳເຊີນ 5**...........................................................................................

   ພຣະເຍຊູໄດ້ເຊີນທ່ານໃຫ້ເຊື່ອໃນພຣະອົງວ່າພຣະອົງເປັນພຣະຜູ້ຊ່ອຍທ່ານໃຫ້ລອດ.

6. **ອ່ານ ໂຢຮັນ 14:1**. ຄຳເຊີນຊວນນີ້ແມ່ນເປັນພື້ນຖານຂອງການເປັນສາວົກຂອງພຣະອົງ

   ຄຳເຊີນ 6...........................................................................................

   ພຣະເຍຊູຢາກໃຫ້ທ່ານໄວ້ວາງໃຈໃນພຣະອົງໃນທຸກໆສິ່ງ ແລະດ້ວຍທຸກໆສິ່ງທີ່ທ່ານມີ

7. **ອ່ານ ມັດທາຍ 16:13-16, 21-23**. ພຣະເຍຊູຢາກໃຫ້ທ່ານໝັ້ນໃຈໃນພຣະອົງ

   **ຄຳເຊີນ 7**...........................................................................................

   ພຣະເຍຊູເຊີນທ່ານເປີດໃຈຮັບເອົາຄຳຕັກເຕືອນຂອງພຣະອົງ ແລະໃຫ້ພຣະອົງປັບປຸງທ່ານເມື່ອທ່ານເດີນອອກນອກທາງແຫ່ງພຣະປະສົງຂອງພຣະອົງ

8. **ອ່ານ ໂຢຮັນ 15:1-9** (ພິເສດຂໍ້ 9). ພຣະເຢຊູຢາກໃຫ້ທ່ານຢູ່ໃສ?

**ຄໍາເຊີນ 8**...........................................................................................

ການຕິດສະໜິດກັບພຣະເຢຊູມີຜົນປະໂຫຍດດັ່ງນີ້:

- ພຣະເຈົ້າຈະຊົງດັດແປງແລະນໍາທາງຊີວິດຂອງທ່ານ
- ພຣະເຈົ້າຈະເຮັດໃຫ້ຊີວິດທ່ານເກີດຜົນຫລາຍ.

9. **ອ່ານ ມັດທາຍ 20:26-28; 25:37-40**. ພຣະເຢຊູຢາກໃຫ້ຜູ້ທີ່ຕິດຕາມພຣະອົງນັ້ນເຮັດກະທໍາສິ່ງໃດຕໍ່ຜູ້ທີ່ຂັດສົນ?

**ຄໍາເຊີນ 9**...........................................................................................

ພຣະອົງໄດ້ຖືວ່າການກະທໍາທີ່ບໍ່ເຫັນແກ່ຕົວຂອງເຮົາຕໍ່ຄົນອື່ນເປັນການກະທໍາທີ່ເຮົາເຮັດຕໍ່ພຣະອົງ

10. **ອ່ານ ມັດທາຍ 11:29**. ພຣະເຊີນຢາກໃຫ້ທ່ານມອບພາລະຂອງທ່ານໃຫ້ພຣະອົງ ແລະຢາກໃຫ້ທ່ານຮຽນຮູ້ຈາກພຣະອົງ ເພື່ອວ່າທ່ານຈະໄດ້ພົບການພັກຜ່ອນທີ່ແທ້ຈິງ.

**ຄໍາເຊີນ 10**.........................................................................................

ການເປັນສາວົກແມ່ນຂັ້ນຕອນການຮຽນຮູ້ອັນຍາວນານຕະຫລອດຊີວິດ. ໃຫ້ຮຽນຮູ້ຈາກພຣະເຢຊູຢູ່ຕະຫລອດເວລາ ຮຽນຮູ້ຈາກພຣະຄຸນ, ອໍານາດ, ແຜນການ, ແລະເວລາຂອງພຣະອົງ. ເມື່ອທ່ານເຮັດຢ່າງນີ້ ທ່ານຈະເຂົ້າມາຫາພຣະອົງດ້ວຍຄວາມມະຫັດສະຈັນໃຈໂດຍບໍ່ມີຫຍັງຢຸດທ່ານໄດ້.

11. **ອ່ານ ມັດທາຍ 28:19**. ພຣະເຢຊູໄດ້ມອບໜ້າທີ່ອັນໃດໃຫ້ແກ່ທ່ານ

**ຄໍາເຊີນ 11**.........................................................................................

ພຣະເຢຊູບໍ່ໄດ້ເອີ້ນຄົນທີ່ດີພ້ອມ ແຕ່ພຣະອົງເຮັດໃຫ້ຄົນທີ່ພຣະອົງເອີ້ນດີພ້ອມ. ພຣະອົງຍິນດີປະທານທຸກສິ່ງຢ່າງໃຫ້ທ່ານທີ່ຈໍາເປັນໃນການນໍາຄົນອື່ນມາສູ່ພຣະອົງ.

12. **ອ່ານ ມັດທາຍ 16:24**. ພຣະເຢຊູໄດ້ໝາຍຄວາມວ່າແນວໃດເມື່ອພຣະອົງບອກທ່ານໃຫ້ແບບກາງແຂນຂອງທ່ານ?

**ຄໍາເຊີນ 12**.........................................................................................

ພຣະເຢຊູໄດ້ເຊີນທ່ານໃຫ້ຕິດພຣະອົງໄປທຸກທີ່ທີ່ພຣະອົງນໍາທາງ. ເສັ້ນທາງແຫ່ງການເປັນສາວົກຂອງທ່ານຈະພາທ່ານຜ່ານພົ້ນຄວາມທຸກຍາກລໍາບາກກາ, ຄວາມຜິດຫວັງ ແລະຜ່ານເວລາທີ່ທ່ານສົງໄສວ່າເປັນຫຍັງທ່ານຕ້ອງເດີນໃນຄວາມເຊື່ອ. ມັນແມ່ນຊ່ວງເວລາເຫລົ່ານັ້ນເອງທີ່ພຣະ

ເຍຊູຈະຢູ່ໃກ້ທ່ານຫລາຍກວ່າອ້າຍເອື້ອຍນ້ອງຂອງທ່ານຢູ່ໃກ້ທ່ານ. ພຣະອົງຈະຮັກທ່ານ ອຸ້ມຊູທ່ານ ແລະກອດທ່ານໄວ້ດ້ວຍຄວາມຮັກແລະຈະບໍ່ມີວັນທອດຖິ້ມທ່ານ.

## ຕັດສິນໃຈເລືອກ

ພຣະເຍຊູຊົງຊື່ນຊົມພຣະໄທໃນການຮັກ, ການນຳທາງ, ແລະການປັ້ນແປງຄົນທຸກຄົນທີ່ເລືອກທີ່ຈະເປັນສາວົກຂອງພຣະອົງ

ທ່ານຈະຕອບຮັບຄຳເຊີນຂອງພຣະເຍຊູທີ່ເຊີນໃຫ້ທ່ານເປັນສາວົກຂອງພຣະອົງບໍ?

ຍ້ອນຫຍັງ?

## ປະຕິບັດ

1. ໃຫ້ສຶກສາ 12 ຄຳເຊີນແຫ່ງການເປັນສາວົກ
   ກ. ໃຫ້ແຕ້ມຮູບດາວໃສ່ຄຳເຊີນທີ່ທ່ານປະຕິບັດໄດ້ດີທີ່ສຸດ
   ຂ. ຂີດວົງກົມອ້ອມໃນ່ຄຳເຊີນທີ່ທ່ານຕ້ອງການໃຫ້ພຣະເຍຊູຊ່ວຍທ່ານມີປະສົບການກັບພຣະອົງ

| | | | | | |
|---|---|---|---|---|---|
| 1. ມານຳເຮົາ | 2. ເປັນໝູ່ເຮົາ | 3. ຮັກເຮົາ | 4. ຖາມເຮົາ | 5. ເຊື່ອເຮົາ | 6. ວາງໃຈເຮົາ |
| 7. ຍອມໃຫ້ເຮົາຖາມແລະບອກສອນ | 8. ຕິດສະໜິດໃນເຮົາ | 9. ຮັບໃຊ້ເຮົາໂດຍການຮັບໃຊ້ຄົນອື່ນ | 10. ຮຽນຮູ້ຈາກເຮົາ | 11. ສອນຜູ້ອື່ນໃຫ້ເປັນສາວົກເຮົາ | 13. ທົນທຸກເພື່ອເຮົາ |

2. ນີ້ແມ່ນຄຳນິຍາມຂອງການເປັນສາວົກຂອງພຣະຄຣິດຕາມແບບຢ່າງຂອງພຣະເຍຊູ:
   **"ສາວົກຂອງພຣະຄຣິດນັ້ນຄືຜູ້ທີ່ເຊື່ອແລະໄວ້ວາງໃຈໃນພຣະອົງຕະຫລອດເວລາທີ່ພຣະຄຣິດປັ້ນ-ແປງເຂົາ ແລະສົ່ງເຂົາໄປສອນຄົນອື່ນໃຫ້ເປັນສາວົກ."**
   ກ. ໃຫ້ຂຽນສັ້ນໆວ່າການເປັນສາວົກພຣະເຍຊູມີຄວາມໝາຍຕໍ່ຊີວິດທ່ານແນວໃດ

໒. ໃຫ້ເອົາບັດການເປັນສາວົກພຣະເຍຊູໄວ້ບ່ອນທີ່ສາມາດເຫັນໄດ້ທຸກໆມື້. ອະທິຖານໃຫ້ທ່ານມີປະການທຸກວັນຂອງການເປັນສາວົກຂອງພຣະອົງ.